**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງໄຊຍະບູລີ

ເລກທີ 756/ຈຂ.ຊຍ

ໄຊຍະບູລີ, ວັນທີ 24/7/2018

# ຂໍ້ຕົກລົງ
# ວ່າດ້ວຍການຄຸ້ມຄອງວຽກງານ
# ວັດທະນະທຳ ແລະ ທຸລະກິດການທ່ອງທ່ຽວ ແຂວງໄຊຍະບູລີ

- ອີງຕາມ ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ (ສະບັບປັບປຸງ) ເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015, ພາກທີ III ໝວດທີ IV ມາດຕາ 20 ວ່າດ້ວຍສິດ, ໜ້າທີ່ຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ.
- ອີງຕາມ ກົດໝາຍວ່າດ້ວຍ ການສ້າງນິຕິກຳ ສະບັບເລກທີ 19/ສພຊ, ລົງວັນທີ 12 ກໍລະກົດ 2012 ພາກທີ IV, ໝວດທີ V ມາດຕາ 77 ວ່າດ້ວຍການສ້າງຄຳສັ່ງ, ຂໍ້ຕົກລົງ ແລະ ຄຳແນະນຳຂອງເຈົ້າແຂວງ, ເຈົ້າຄອງນະຄອນ, ເຈົ້າເມືອງ ແລະ ຫົວໜ້າເທດສະບານ.
- ອີງຕາມ ກົດໝາຍວ່າດ້ວຍ ການທ່ອງທ່ຽວ ສະບັບປັບປຸງ ເລກທີ່ 05/ສພຊ, ລົງວັນທີ 24 ກໍລະກົດ 2013.
- ອີງຕາມ ດຳລັດ ທີ່ກ່ຽວຂ້ອງກັບວຽກງານ ວັດທະນະທຳ
- ອີງຕາມ ມະຕິຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ່ 4 ຂອງສະພາປະຊາຊົນແຂວງ ເລກທີ 15/ສພຂ.ຊຍ, ລົງວັນທີ 5 ກຸມພາ 2018

## ເຈົ້າແຂວງໄຊຍະບູລີຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດບັນດາຫຼັກການ, ລະບຽບການ, ມາດຕະການ ແລະ ການຄຸ້ມຄອງບັນດາຫົວໜ່ວຍທຸລະກິດ ພາຍໃນແຂວງໄຊຍະບູລີ ໃຫ້ເຄື່ອນໄຫວຖືກຕ້ອງຕາມມາດຕະຖານ, ເພື່ອຊຸກຍູ້ ສົ່ງເສີມ ວຽກງານວັດທະນະທຳ, ການອານຸລັກ, ປົກປັກຮັກສາ ແລະ ເສີມຂະຫຍາຍມູນເຊື້ອ ສິລະປະວັດທະນະທຳອັນດີງາມຂອງຊາດຂອງເຜົ່າ, ແນ່ໃສ່ຮັບປະກັນຄວາມເປັນລະບຽບຮຽບຮ້ອຍ, ພ້ອມທັງສ້າງເງື່ອນໄຂອັນສະດວກໃຫ້ແກ່ການດຳເນີນທຸລະກິດການທ່ອງທ່ຽວ ແລະ ໃຫ້ແກ່ຜູ້ເຂົ້າມາຊົມໃຊ້ບໍລິການ ໄດ້ມີຄວາມປະທັບໃຈ.

**ມາດຕາ 2 ນິຍາມ:**

1. **ວັດທະນະທຳ ແມ່ນ:** ຄຸນຄ່າອັນລວມຍອດຂອງການສະສົມບັນດາຜະລິດຕະພັນທາງດ້ານວັດຖຸ ແລະ ຈິດໃຈທີ່ມວນມະນຸດໄດ້ປະດິດສ້າງຂຶ້ນມາ ໂດຍຜ່ານຂະບວນວິວັດທາງປະຫວັດສາດ ແມ່ນໝາກຜົນຂອງຄວາມຈະເລີນງອກງາມ, ຄວາມດີ, ຄວາມງາມທີ່ສັງຄົມນັ້ນໆ ປະດິດສ້າງຂຶ້ນ ແລະ ສະສົມຖ່າຍ ທອດມາຮອດປັດຈຸບັນ.
2. ***ທຸລະກິດການທ່ອງທ່ຽວ :*** ແມ່ນການມີສ່ວນຮ່ວມຂອງຫຼາຍພາກສ່ວນ ເຊິ່ງປະກອບດ້ວຍທຸລະກິດແຫຼ່ງທ່ອງທ່ຽວ, ທຸລະກິດນຳທ່ຽວ, ທຸລະກິດຂົນສົ່ງນັກທ່ອງທ່ຽວ, ທຸລະກິດພັກແຮມ, ທຸລະກິດພັດຕາຄານ-ຮ້ານອາຫານ, ທຸລະກິດເຝິກອົບຮົມການທ່ອງທ່ຽວ, ທຸລະກິດທີ່ປຶກສາການທ່ອງທ່ຽວ, ທຸລະກິດສະຖານບັນເທີງ

ແລະ ທຸລະກິດເຄື່ອງທີ່ລະນຶກ ແລະ ທຸລະກິດອື່ນໆ ທີ່ພົວພັນເຖິງການທ່ອງທ່ຽວ.

**ມາດຕາ 3 ອະທິບາຍຄຳສັບ.**

1. **ວັດທະນະທຳມະຫາຊົນ** ໝາຍເຖິງມໍລະດົກອັນສຳຄັນຂອງປະຊາຊົນລາວທົ່ວປະເທດ, ກໍຄືປະຊາຊົນແຂວງ

ໄຊຍະບູລີ, ມັນແມ່ນວັດທະນະທຳ ທີ່ຍັງຢືນເຖິງຄວາມເປັນຊາດລາວ ແລະ ວັດທະນະທຳມະຫາຊົນ ແມ່ນວຽກງານຂອງທົ່ວປວງຊົນ.

- **ປະເພນີ**" ແມ່ນບັນດາຂະນົບທຳນຽມ, ແບບແຜນທີ່ເປັນເອກະລັກສະເພາະ ປະຈຳຊາດມາແຕ່ບູຮານ ຊາດໃດໆ ກໍຍ່ອມມີປະເພນີເປັນຂອງຊາດຕົນ ຄົນລາວເຮົາກໍມີປະເພນີ, ມີວັດທະນະທຳເຮົາອັນເປັນມໍລະດົກທີ່ປະເສີດ ເຊິ່ງໄດ້ສະນິດຕິດພັນກັບຄົນລາວ ຈົນມາເຖິງປັດຈຸບັນ.
- **ພິທີກຳ** ແມ່ນແບບ ຫຼື ວິທີປະຕິບັດທີ່ເປັນກິດຈະກຳໃນຊີວິດຂອງຄົນເຮົາ **ຕາມຮູບແບບຂອງຄວາມເຊື່ອຖື** ຕ່າງໆຂອງບັນພະບູລຸດ. ປູ່ຍ່າຕາຍາຍທີ່ນຳມາປະຕິບັດສືບຕໍ່ກັນມາເພື່ອເປັນກັນສະໜອງຕໍ່ຄວາມມຸ້ງມາດປາຖະໜາອັນດີງາມ, ເປັນຂວັນກຳລັງໃຈຕໍ່ຄົນເຮົາ ເພື່ອໃຫ້ເກີດຄວາມເຊື່ອໝັ້ນໃນຊີວິດ.
- "**ຮີດ**" ແມ່ນຄຳທີ່ໄດ້ມາຈາກພາສາບາລີໃນຄຳວ່າ "**ຈາຮິຕະ**" ຊຶ່ງມີຄວາມໝາຍວ່າຂະນົບທຳນຽມປະເພນີທີ່ເຄີຍປະຕິບັດສືບຕໍ່ກັນມາ ໃນແຕ່ລະເດືອນໃນຮອບປີໜຶ່ງ 12 ເດືອນ.
- **ຮີດຄອງປະເພນີ**" ແມ່ນລະບຽບແບບແຜນ ຫຼື ກົດໝາຍພື້ນຖານຂອງປະຊາຊົນລາວບັນດາເຜົ່າອັນເປັນສ່ວນໜຶ່ງຂອງຊີວິດວັດທະນະທຳ ເຊິ່ງສະແດງອອກໃນແຕ່ກ່ອນກໍຄືປັດຈຸບັນໄດ້ຍຶດຖື ຮີດ 12, ຄອງ 14 ມາເປັນແບບແຜນດຳລົງຊີວິດ.

2. **ການພິມຈຳໜ່າຍ** ໝາຍເຖິງການຈັດພິມ, ການພິມ ແລະ ການຈຳໜ່າຍ ຊຶ່ງນຳເອົາຜົນງານການຄົ້ນຄວ້າປະດິດ

ຄິດແຕ່ງ, ແປພາສາ ແລະ ຮູບແຕ້ມ ຫຼື ຮູບຖ່າຍ, ມາກວດແກ້, ຮຽບຮຽງແລ້ວ ຈັດເປັນຕົ້ນສະບັບສົມບູນເພື່ອສົ່ງເຂົ້າພິມເປັນຫຼາຍສະບັບໃນຮູບແບບປຶ້ມ, ສິ່ງພິມເອເລັກໂຕຼນິກ ຫຼື ສິ່ງພິມອື່ນເພື່ອຈຳໜ່າຍ.

3. **ມໍຣະດົກແຫ່ງຊາດ** ທາງດ້ານວັດທະນະທຳ ແລະ ປະຫວັດສາດໝາຍເຖິງມໍຣະດົກທີ່ເປັນວັດຖຸ ຫຼື ບໍ່ເປັນວັດຖຸ, ເປັນສັງຫາລິມະຊັບ ຫຼື ອະສັງຫາລິມະຊັບທີ່ມີຄຸນຄ່າສູງທາງດ້ານວັດທະນະທຳ, ປະຫວັດສາດ, ວິທະຍາສາດ ຫຼື ເຕັກໂນໂລຊີທີ່ເປັນສົມບັດຂອງຊາດ, ຂອງແຂວງ ໄດ້ຮັບການສືບທອດ ກັນມາແຕ່ລະຍຸກແຕ່ລະສະໄໝ
4. ມໍຣະດົກແຫ່ງຊາດ ທາງດ້ານທຳມະຊາດ ໝາຍເຖິງມໍຣະດົກທີ່ເກີດຂຶ້ນໂດຍທຳມະຊາດທີ່ມີຊີວິດ ຫຼື ບໍ່ມີຊີວິດເຊິ່ງມີຄຸນຄ່າສູງທາງດ້ານທັດສະນີຍະພາບ ແລະ ຊີວະນາໆພັນ ທີ່ຍັງຄົງຄວາມສົມບູນທາງທຳມະຊາດ ແລະ ຄວາມສວຍສົດງົດງາມ.
5. **ວິຈິດສິນ** ໝາຍເຖິງສິ່ງທີ່ມະນຸດສ້າງຂຶ້ນ ຈາກຄຸນຄ່າອັນລວມຍອດຂອງອາລົມຈິດ ໂດຍຜ່ານການປະດິດ ທາງດ້ານສີມືອັນປານີດ ເພື່ອຄວາມງົດງາມ, ຄວາມເພິ່ງພໍໃຈ ຊຶ່ງມີຄຸນຄ່າທາງດ້ານຈິດໃຈ ໂດຍບໍ່ສິ້ນສຸດ, ປະກອບດ້ວຍຈິດຕະກຳ, ປະຕິມາກຳ, ສະຖາປັດຕະຍະກຳສິນ, ພາບພິມ ແລະ ຫັດຖະກຳສິນ.
6. **ຮູບເງົາ** ໝາຍເຖິງສິລະປະສັງລວມ ແລະ ເປັນສື່ບັນເທີງທີ່ເຂົ້າເຖິງຢ່າງກວ້າງຂວາງ ໂດຍໄດ້ສະແດງໃຫ້ເຫັນເປັນພາບເຄື່ອນໄຫວປະກອບກັບສຽງ ໄດ້ບັນທຶກໃສ່ຟິມ, ກາແຊັດວີດີໂອ, ແຜ່ນຊີດີ, ດີວີດີ, ຮາດດິດ ຫຼື ວັດຖຸບັນທຶກແບບອື່ນ ເພື່ອເຜີຍແຜ່ຕໍ່ມວນຊົນ ໂດຍຜ່ານພາຫານະເຕັກນິກຕ່າງໆ.
7. **ສວນສາທາລະນະ** ໝາຍເຖິງສະຖານທີ່ ທີ່ສວຍງາມ, ເປັນສະຖານທີ່ເອກອ້າງທະນົງໃຈຂອງຄົນຢູ່ໃນສັງຄົມ, ສ່ວນສາທາລະນະແມ່ນຫົວກິດປະດິດສ້າງຂອງຄົນໃນການກັດແປງທຳມະຊາດມາຮັບໃຊ້ສັງຄົມດ້ານຈິດໃຈ-ແຕ່ບໍ່ໃຫ້ເສຍສະພາບແວດລ້ອມ ແລະ ທຳມະຊາດ, ສວນສາທາລະນະແມ່ນພາກສ່ວນໜຶ່ງຂອງວັດທະນະທຳແຫ່ງ

ການສະຫງອນຄວາມງາມ, ແມ່ນຊີວິດການເປັນຢູ່ທາງດ້ານວັດທະນະທຳສັງຄົມ ແລະ ແມ່ນລະບົບໃດໜຶ່ງທາງດ້ານທັດສະນະຕໍ່ຄວາມງາມດ້ານການປະດັບຕົກແຕ່ງສວນ ຫຼື ທຳມະຊາດ.

8. **ສິລະປະການສະແດງ** ໝາຍເຖິງການເຄື່ອນໄຫວນຳເອົາຜົນງານ, ຜະລິດຕະພັນ ດ້ານວັດທະນະທຳອອກສະແດງ
ສູ່ມວນຊົນ ດ້ວຍການຂັບ, ລຳ, ຮ້ອງເພງ, ຟ້ອນ, ດົນຕີ, ກາຍະສິນ, ລະຄອນປະເພດຕ່າງໆ ແລະ ສິລະປະການສະແດງອື່ນ ໂດຍການນຳໃຊ້ເຕັກນິກ, ແສງ, ສີ, ສຽງປະກອບໃນເວທີ.

9. **ໂຮງແຮມ** ໝາຍເຖິງສະຖານທີ່ພັກເຊົາ ເຊິ່ງປະກອບດ້ວຍ 15 ຫ້ອງຂຶ້ນໄປ, ເຮືອນພັກ ແລະ ລີສອດ ໝາຍເຖິງທີ່ພັກເຊົາ ເຊິ່ງປະກອບດ້ວຍ 5 ຫ້ອງນອນຂຶ້ນໄປ ໂດຍມີສິ່ງອຳນວຍຄວາມສະດວກ, ມີອຸປະກອນເຄື່ອງໃຊ້ທີ່ມີຄຸນະພາບ ແລະ ການບໍລິການທີ່ດີມີມາດຕະຖານ.

10. **ຮ້ານອາຫານ** ໝາຍເຖິງສະຖານທີ່ບໍລິການອາຫານການກິນ ແລະ ພ້ອມທັງບໍລິການເຄື່ອງດື່ມ.

11. **ຮ້ານກິນດື່ມ** ໝາຍເຖິງສະຖານທີ່ບໍລິການເຄື່ອງດື່ມເປັນຕົ້ນຕໍ ພ້ອມທັງບໍລິການອາຫານເບົາເປັນສ່ວນຮອງ ບົນພື້ນຖານການໃຊ້ຈ່າຍຄ່າບໍລິການດັ່ງກ່າວຕາມເງື່ອນໄຂ ແລະ ລະດັບບໍລິການແຕກຕ່າງກັນ.

12. **ຮ້ານບັນເທີງ** ໝາຍເຖິງສະຖານທີ່ໃຫ້ຄວາມເບີກບານມ່ວນຊື່ນ, ຄວາມສຸກສັນດ້ວຍສຽງເພັງ, ສຽງດົນຕີ, ຂັບລຳຕ່າງໆ.

13. **ແຫຼ່ງທ່ອງທ່ຽວ** ໝາຍເຖິງຊັບພະຍາກອນທຳມະຊາດ ແລະ ປະຫວັດສາດທີ່ຍອດຍິ່ງ ທີ່ໄດ້ຮັບການພັດທະນາໃຫ້ເປັນສະຖານທີ່ທ່ອງທ່ຽວ ເພື່ອສາມາດດຶງດູດນັກທ່ອງທ່ຽວໃຫ້ເດີນທາງມາທ່ຽວຊົມ.

**ມາດຕາ 4 : ຂອບເຂດສິດໃນການນຳໃຊ້ຂໍ້ຕົກລົງສະບັບນີ້.**

ຂໍ້ຕົກລົງສະບັບນີ້ ນຳໃຊ້ເຂົ້າໃນວຽກງານຄຸ້ມຄອງ-ກວດກາວັດທະນະທຳມະຫາຊົນ, ມໍຣະດົກ-ວິຈິດສິນ, ຟີມ-ຈຳໜ່າຍຮູບເງົາ, ສິລະປະການສະແດງ ແລະ ຄຸ້ມຄອງຫົວໜ່ວຍທຸລະກິດການທ່ອງທ່ຽວ ພາຍໃນແຂວງໄຊຍະບູລີ.

## ໝວດທີ 2
## ວ່າດ້ວຍການຄຸ້ມຄອງ ແລະ ອະນຸລັກສົ່ງເສີມວຽກງານວັດທະນະທຳ

**ມາດຕາ 5: ອະນຸລັກ-ສົ່ງເສີມວັດທະນະທຳມະຫາຊົນ.**

**1. ຮີດຄອງປະເພນີ-ພິທີກຳ.**

- ສົ່ງເສີມ ແລະ ອຳນວຍຄວາມສະດວກໃຫ້ທຸກພາກສ່ວນມີສ່ວນຮ່ວມໃນການເຮັດບຸນ ແລະ ພິທີກຳຕ່າງໆ ໂດຍຖືກຕ້ອງກັບຮີດຄອງປະເພນີອັນດີງາມຂອງຊາດ, ຖືກຕ້ອງກັບແນວທາງນະໂຍບາຍຂອງພັກ ແລະ ລະບຽບກົດໝາຍຂອງລັດ.
- ບຸກຄົນ ແລະ ການຈັດຕັ້ງ ຕັ້ງກອງມະຫາກະຖິນ ຫຼື ວ່າກອງຜ້າປ່າສາມັກຄີທີ່ໄດ້ຮັບອະນຸຍາດແລ້ວ ນຳໄປທອດຖວາຍ ເພື່ອເປັນການກຸສົນ ສົງເຄາະຊ່ວຍເຫຼືອບັນເທົາທຸກແກ່ວັດ, ບ້ານ, ເມືອງ, ແຂວງທີ່ປະສົບເຄາະຮ້າຍຈາກໄພພິບັດຕ່າງໆນັ້ນດ້ວຍການແຈ້ງຂ່າວປ່າວກຸສົນ ຜ່ານສື່ສານມວນຊົນເຊັ່ນທາງວິທະຍຸໂທລະພາບ, ໂທລະໂຄ່ງ ແລະ ສື່ສິ່ງພິມຕ່າງໆ.
- ອຳນາດການປົກຄອງບ້ານ, ອຳນາດການປົກຄອງເມືອງ ກຳນົດສະຖານທີ່ຝັງສົບ (ປ່າຊ້າ) ຂອງແຕ່ລະຊົນເຜົ່າໃຫ້ຖືກຕ້ອງຕາມຮີດຄອງ-ປະເພນີ ແລະ ລະບຽບການ.
- ຊຸກຍູ້- ສົ່ງເສີມ ແລະ ອຳນວຍຄວາມສະດວກກ່ຽວກັບປະເພນີການແຕ່ງດອງ ໃຫ້ຖືກຕ້ອງກັບຮີດຄອງ-ປະເພນີອັນດີງາມຂອງຊາດ, ຂອງເຜົ່າ.

**2. ວຽກງານປ້າຍ.**

- ການຄຸ້ມຄອງ-ກວດກາ ປ້າຍ, ປ້າຍໂຄສະນາ ແລະ ບໍລິການ ໃຫ້ມີຄວາມເປັນເອກະພາບໃນທາງປະຕິບັດ, ທັງຮັບປະກັນຄວາມເປັນລະບຽບຮຽບຮ້ອຍ, ສວຍງາມ ຄວາມເປັນເອກະພາບທາງດ້ານເນື້ອໃນ ແລະ ຮູບການ.

- ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງໃນການດຳເນີນກິດຈະການກ່ຽວກັບປ້າຍເປັນຕົ້ນການອອກແບບ, ການຜະລິດ ແລະ ຕິດຕັ້ງປ້າຍ ຕ້ອງໄດ້ຮັບການອານຸຍາດ ນຳຂະແໜງຖະແຫຼງຂ່າວ ວັດທະນະທຳ ແລະ ທ່ອງທ່ຽວຢ່າງຖືກຕ້ອງ ຕາມການແບ່ງຂັ້ນຄຸ້ມຄອງ.

**3. ວຽກສວນສາທາລະນະ.**

- ສົ່ງເສີມໃຫ້ມີການສ້າງສວນສາທາລະນະທຸກລະດັບ "ໜຶ່ງເມືອງໜຶ່ງສວນສາທາລະນະ " ແລະ ໃຫ້ມີການຄຸ້ມຄອງຄວາມເປັນລະບຽບຮຽບຮ້ອຍຕາມຫຼັກວິຊາການ.

**4.** ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ໃນການຈັດຕັ້ງຫຼິ້ນເກມພື້ນເມືອງ, ເກມເຝິກສະໝອງລອງປັນຍາ ແລະ ເກມ ທີ່ມີລັກສະນະມ່ວນຊື່ນລື່ນເລີງ ທີ່ບໍ່ຂັດກັບຮີດຄອງປະເພນີ ແລະ ຂັດກັບລະບຽບກົດໝາຍ.

**ມາດຕາ 6: ອະນຸລັກ-ສົ່ງເສີມການພິມຈຳໜ່າຍ.**

- ສົ່ງເສີມ ແລະ ພັດທະນາການພິມຈຳໜ່າຍ ແລະ ຫໍສະໝຸດ "ໜຶ່ງເມືອງໜຶ່ງຫໍສະໝຸດ " ໃຫ້ຂະຫຍາຍຕົວທາງດ້ານປະລິມານ ແລະ ຄຸນນະພາບ, ຊຸກຍູ້ການປະດິດແຕ່ງ, ການອ່ານ, ການຊອກຮູ້ຮໍ່າຮຽນຢ່າງກວ້າງຂວາງ, ທີ່ວເຖິງດ້ວຍນະໂຍບາຍຕ່າງໆ.

- ຊຸກຍູ້ໃຫ້ການຈັດຕັ້ງ, ບຸກຄົນ, ນິຕິບຸກຄົນ ທັງພາຍໃນ ແລະ ຕ່າງປະເທດຕ້ອງໄດ້ປະກອບສ່ວນເຂົ້າໃນວຽກງານພິມຈຳໜ່າຍ ແລະ ຫໍສະໝຸດ.

**ມາດຕາ 7: ອະນຸລັກ-ສົ່ງເສີມມໍຣະດົກ.**

- ສົ່ງເສີມໃຫ້ມີການສຳຫຼວດ, ຂຶ້ນບັນຊີ, ຂຶ້ນທະບຽນ ແລະ ຮັບຮອງເອົາມໍຣະດົກຂອງຊາດຢູ່ພາຍໃນແຂວງ ຕາມຫຼັກວິຊາການ.

- ຄຸ້ມຄອງ, ປົກປ້ອງກຳມະສິດ ຫຼື ລິຂະສິດ ຕໍ່ມໍຣະດົກແຫ່ງຊາດ, ມໍຣະດົກທ້ອງຖິ່ນ ທາງດ້ານວັດທະນະທຳ, ທຳມະຊາດ ແລະ ປະຫວັດສາດ ທີ່ເປັນຂອງບຸກຄົນ, ນິຕິບຸກຄົນ ພາຍໃນແຂວງ ທີ່ເປັນກຳມະສິດ ຖືກ ຕ້ອງຕາມກົດໝາຍ.

- ສົ່ງເສີມໃຫ້ມີ 1 ເມືອງ 1 ຫໍພິພິທະພັນເພື່ອສະແດງມູນເຊື້ອມໍລະດົກວັດທະນະທຳ, ທຳມະຊາດ ແລະ ປະຫວັດສາດຂອງເມືອງຕິດພັນກັບການທ່ອງທ່ຽວ.

**ມາດຕາ 8: ອະນຸລັກ-ສົ່ງເສີມວິຈິດສິນ.**

- ວຽກງານອະນຸລັກ,  ພັດທະນາ, ເຜີຍແຜ່ ກ່ຽວກັບ ເອກະລັກສິລະປະວິຈິດສິນຂອງຊາດ, ຂອງທ້ອງຖິ່ນ, ມະຫາຊົນທີ່ມີລັກສະນະຊາດ ແລະ ກ້າວໜ້າໃຫ້ຍືນຍົງ.

- ຄົ້ນຄວ້າ, ການປະດິດສ້າງ, ການເຜີຍແຜ່ຄຸນຄ່າທີ່ມີລັກສະນະຊາດ, ມະຫາຊົນ ແລະ ກ້າວໜ້າຂອງງານວິຈິດສິນພ້ອມທັງຈຳກັດ, ແກ້ໄຂສິ່ງກີດໜ່ວງຖ່ວງດຶງຄວາມກ້າວໜ້າ ຂອງປະຊາຊົນບັນດາເຜົ່າ ໃນທົ່ວແຂວງ.

- ຊຸກຍູ້ສົ່ງເສີມບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ໃຫ້ດຳເນີນການຄົ້ນຄວ້າວິໄຈກ່ຽວກັບວຽກງານວິຈິດສິນ ດ້ວຍນະໂຍບາຍຕ່າງໆຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 9: ຄຸ້ມຄອງ,ອະນຸລັກ-ສົ່ງເສີມຮູບເງົາ.**

- ຊຸກຍູ້ ແລະ ສົ່ງເສີມ ການພັດທະນາເຜີຍແຜ່ຜະລິດຕະພັນ ທີ່ໄດ້ຮັບອະນຸຍາດຖືກຕ້ອງແລ້ວ.

- ອຳນວຍຄວາມສະດວກໃຫ້ແກ່ໜ່ວຍງານຮູບເງົາທີ່ມາເຄື່ອນໄຫວ ໂດຍຖືກຕ້ອງຕາມລະບຽບກົດໝາຍ.

**ມາດຕາ 10: ຄຸ້ມຄອງ, ອະນຸລັກ-ສົ່ງເສີມສິລະປະການສະແດງ.**

- ຊຸກຍູ້, ຟື້ນຟູ, ສົ່ງເສີມ, ອະນຸລັກ, ພັດທະນາ ແລະ ເຜີຍແຜ່ສິລະປະການສະແດງຂອງຊາດ, ຂອງເຜົ່າທີ່ມີລັກສະນະຊາດ, ກ້າວໜ້າ ແລະ ມະຫາຊົນ ໃຫ້ມີຄວາມອຸດົມສົມບູນດ້ວຍການບຳລຸງຍົກສູງຄວາມຮູ້ຄວາມສາມາດ, ສ້າງຄົນລາວໃຫ້ມີນໍ້າໃຈຮັກຊາດ, ຮັກລະບອບປະຊາທິປະໄຕປະຊາຊົນ, ມີແບບແຜນການດຳລົງຊີວິດທີ່ສົດໃສງົດ

ງາມ, ຮັບເອົາສິ່ງຍອດຍິ່ງຂອງມວນມະນຸດ ແລະ ປະກອບສ່ວນເສີມສ້າງສິລະປະວັດທະນະທຳອັນດີງາມ ຂອງຊາດ, ຂອງເຜົ່າ, ຂອງແຂວງໃຫ້ຍືນຍົງ.

- ສົ່ງເສີມໃຫ້ນັກສິລະປິນທັງພາຍໃນ ແລະ ຕ່າງປະເທດໃຫ້ມີການເຄື່ອນໄຫວສະແດງຖືກຕ້ອງຕາມລະ ບຽບກົດໝາຍ.
- ສົ່ງເສີມໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີສ່ວນຮ່ວມໃນການຄົ້ນຄວ້າປະດິດແຕ່ງ, ພັດທະນາສ້າງສັນ, ສາມັກຄີປອງດອງ, ຊົມໃຊ້ ແລະ ສົ່ງເສີມສິລະປະການສະແດງ ໃຫ້ມີຄວາມອຸດົມຮັ່ງມີຫຼາຍຮູບ, ຫຼາຍສີ, ມີເອກະລັກ ຂອງຊາດ, ຂອງແຂວງ, ຂອງປະຊາຊົນບັນດາເຜົ່າ ຕອບສະໜອງຄວາມຮຽກຮ້ອງຕ້ອງການ ທາງດ້ານຊີວິດຈິດໃຈ ຂອງປະຊາຊົນ ເຮັດໃຫ້ຜະລິດຕະພັນ ດ້ານສິລະປະການສະແດງ ມີປະລິມານ ແລະ ຄຸນນະພາບ.

## ໝວດທີ 3
## ການຄຸ້ມຄອງທີ່ອໜ່ວຍທຸລະກິດການທ່ອງທ່ຽວ

**ມາດຕາ 11: ຄຸ້ມຄອງ,ອະນຸລັກ-ສົ່ງເສີມກ່ຽວກັບວຽກງານທ່ອງທ່ຽວ.**

ແຂວງໄຊຍະບູລີ ຖືເອົາວຽກງານທ່ອງທ່ຽວ ເປັນບູລິມະສິດໜຶ່ງ ໃນການພັດທະນາ ເສດຖະກິດ-ສັງຄົມ ເພື່ອສົ່ງເສີມການຜະລິດສິນຄ້າ, ການບໍລິການ, ການສ້າງວຽກເຮັດງານທຳ, ສ້າງລາຍໄດ້ ແລະ ປັບປຸງຊີວິດການເປັນຢູ່ ຂອງປະຊາຊົນບັນດາເຜົ່າໃຫ້ດີຂຶ້ນ.

ສົ່ງເສີມການທ່ອງທ່ຽວທາງດ້ານທຳມະຊາດ, ວັດທະນະທຳ ແລະ ປະຫວັດສາດ ໃຫ້ມີຫຼາຍສີສັນເປັນໜ້າ ທ່ອງທ່ຽວ, ກາຍເປັນແຫຼ່ງທ່ອງທ່ຽວສີຂຽວ ທີ່ມີຄວາມຍືນຍົງ ແລະ ກາຍເປັນອຸດສາຫະກຳ ແລະ ທັນສະໄໝ.

ຊຸກຍູ້, ສົ່ງເສີມ ເປີດກວ້າງ ອຳນວຍຄວາມສະດວກ ແລະ ປົກປ້ອງສິດຜົນປະໂຫຍດຂອງບຸກຄົນ, ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ທີ່ລົງທຶນເຂົ້າໃນການພັດທະນາ ແລະ ການສົ່ງເສີມການທ່ອງທ່ຽວ ດ້ວຍ ການໂຄສະນາ, ໃຫ້ຂໍ້ມູນຂ່າວສານ, ການຈັດນິທັດສະການ, ເທດສະການ, ງານບຸນ ກ່ຽວກັບສິລະປະວັດທະນະທຳ, ຮີດຄອງປະເພນີອັນດີງາມຂອງຊາດ, ຂອງແຂວງ, ຂອງເມືອງ ແລະ ມູນເຊື້ອພື້ລະອາດຫານຂອງປະຊາຊົນບັນດາເຜົ່າ.

**ມາດຕາ 12: ການຄຸ້ມຄອງຂັ້ນແຂວງ.**

ໂຮງແຮມ, ຣີສອດ ແລະ ເຮືອນພັກ ທີ່ໄດ້ຈັດລະດັບດອກຈຳປາ ໂດຍແມ່ນທາງພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ ເປັນຜູ້ອະນຸມັດ-ສ້າງຕັ້ງ ແລະ ຍຸບເລີກ.

**ມາດຕາ 13: ການຄຸ້ມຄອງຂັ້ນເມືອງ.**

ເຮືອນພັກ ທີ່ບໍ່ທັນໄດ້ຈັດລະດັບເປັນດອກຈຳປາ ແລະ ຮ້ານອາຫານ, ຮ້ານກິນດື່ມ ແລະ ບັນເທີງ ໂດຍ ແມ່ນທ່ານເຈົ້າເມືອງ ເປັນຜູ້ពិຈາລະນາອະນຸມັດສ້າງຕັ້ງ ແລະ ຍົກເລີກ.

**ມາດຕາ 14: ເງື່ອນໄຂຂອງຜູ້ປະກອບການທຸລະກິດການທ່ອງທ່ຽວ, ຂອບເຂດການນຳໃຊ້.**

1. ຜູ້ປະກອບການທຸລະກິດທ່ອງທ່ຽວ ຕ້ອງໄດ້ຮັບອະນຸຍາດການດຳເນີນທຸລະກິດ ນຳພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ ຫຼື ຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວເມືອງ, ຕ້ອງ ໄດ້ຂຶ້ນທະບຽນວິສາຫະກິດ ນຳພະແນກອຸດສາຫະກຳ ແລະ ການຄ້າແຂວງ ຫຼື ຫ້ອງການອຸດສາຫະກຳ ແລະ ການຄ້າປະຈຳເມືອງ ແລະ ຂຶ້ນທະບຽນອາກອນ ນຳພະແນກການເງິນແຂວງ ຫຼື ຫ້ອງການການເງິນເມືອງ ຕາມຂະ ໜາດ ແລະ ລະດັບຂອງການດຳເນີນທຸລະກິດ ທີ່ລະບຸໄວ້ໃຫ້ຖືກຕ້ອງຕາມລະບຽບການ ແລະ ກົດໝາຍ.
2. ທຸລະກິດການທ່ອງທ່ຽວ ທີ່ໄດ້ຮັບອະນຸຍາດດຳເນີນທຸລະກິດແລ້ວ ຜູ້ປະກອບການຕ້ອງໄດ້ປະກອບສິ່ງອຳນວຍ ຄວາມສະດວກເພີ່ມເຕີມ ເພື່ອຕອບສະໜອງໃຫ້ແຂກທີ່ເຂົ້າມາຊົມໃຊ້ບໍລິການ ໃນສະຖານທີ່ຂອງຕົນ ເຊັ່ນ: ການພັກເຊົາ, ການໃຊ້ດົນຕີພື້ນເມືອງ, ດົນຕີສາກົນ, ເອເລັກໂທນ, ເທບ, ຊີດີ, ວີຊີດີ ແລະ ໂທລະພາບຕາມ ລັກສະນະ ແລະ ລະດັບການບໍລິການ ແຕ່ຕ້ອງຂໍອະນຸຍາດນຳຂະ ແໜງການທີ່ກ່ຽວຂ້ອງເສຍກ່ອນ ເພື່ອ ຮັບປະກັນບໍ່ໃຫ້ມີສຽງລົບກວນຜູ້ທີ່ຢູ່ໃກ້ຄຽງ.

3. ຜູ້ປະກອບການທຸລະກິດທ່ອງທ່ຽວ ທີ່ໄດ້ຮັບອະນຸຍາດດຳເນີນທຸລະກິດແລ້ວ ຕ້ອງມີໃບອະນຸ ຍາດການນຳໃຊ້ຜູ້ອອກແຮງງານ ແລະ ມີສັນຍາແຮງງານ ພ້ອມທັງກຳນົດເງິນເດືອນຕ່ຳສຸດ ຫຼື ຄ່າແຮງງານ ໃຫ້ພະນັກງານຢູ່ໃນທຸລະກິດຂອງຕົນ ( ຖ້າວ່າແຮງງານຕ່າງປະເທດຕ້ອງປະກອບເອກະສານໃຫ້ຖືກຕ້ອງຕາມຂັ້ນຕອນຂອງກົດໝາຍ)
4. ພະນັກງານບໍລິການຮັບໃຊ້ຢູ່ໃນທຸລະກິດການທ່ອງທ່ຽວ ຕ້ອງໄດ້ຮັບການກວດສຸຂະພາບ ແລະ ມີໃບຢັ້ງຢືນສຸຂະພາບ ຈາກໂຮງໝໍຂອງລັດ.

**ມາດຕາ 15: ມາດຖານ, ເງື່ອນໄຂ ການສ້າງຕັ້ງ ແລະ ດຳເນີນທຸລະກິດການທ່ອງທ່ຽວ.**

1. ທຸລະກິດການທ່ອງທ່ຽວ ຕ້ອງຕັ້ງຢູ່ສະຖານທີ່ທີ່ເໝາະສົມ, ເປີດເຜີຍ, ກວ້າງຂວາງ, ມີບ່ອນຈອດລົດພຽງພໍ, ຕຶກ, ອາຄານ ຕ້ອງແໜ້ນໜາຖາວອນ ແລະ ເໝາະສົມກັບຂະໜາດການບໍລິການຂອງຕົນ.

2. ການປະດັບປະດາຕ້ອງມີລັກສະນະຊາດ ແລະ ສາກົນ, ອຸປະກອນຮັບໃຊ້ຕ້ອງໄດ້ມາດຕະຖານ, ການຈັດຕັ້ງບໍລິຫານຕ້ອງເປັນລະບົບ, ການປະກອບພະນັກງານ ໃຫ້ພຽງພໍກັບຄວາມຕ້ອງການ, ພະນັກງານ ຕ້ອງຮູ້ຈັກວິຊາສະເພາະດ້ານການບໍລິການ ແລະ ພ້ອມທັງຮູ້ຈັກ ພາສາສາກົນ ຢ່າງໜ້ອຍ 01 ພາສາ, ຕ້ອງມີເຄື່ອງແບບໃຫ້ພະນັກງານນຸ່ງຖື ທັງ ຍິງ ແລະ ຊາຍ ທີ່ເປັນເອກະລັກຂອງຊາດລາວ ພ້ອມທັງຮັບປະກັນດ້ານກິລິຍາມາລະຍາດ, ຄຸນສົມບັດຂອງພະນັກງານ.

3. ຮັບປະກັນໃຫ້ແສງສະຫວ່າງພຽງພໍ ແລະ ຮັບປະກັນຄວາມປອດໄພ ພ້ອມທັງໄດ້ຮັບການຝຶກອົບຮົມ, ຍົກລະດັບດ້ານວິຊາສະເພາະທີ່ກ່ຽວຂ້ອງເປັນປົກກະຕິ ເພື່ອຍົກສູງທາງດ້ານຄຸນສົມບັດສິນທຳປະຕິວັດ, ກິລິຍາມາລະຍາດທ່າທີຮັບໃຊ້.

4. ຕ້ອງໄດ້ສ້າງລະບົບການບໍລິການຕາມຄວາມເໝາະສົມໂດຍສະເພາະຫ້ອງນ້ຳ ໃຫ້ແຍກຫ້ອງນ້ຳຍິງ ແລະ ຫ້ອງນ້ຳຊາຍ.

5. ການປະກອບເຄື່ອງອຸປະກອນຮັບໃຊ້ຫຼືພາຊະນະຕ້ອງຮັບປະກັນຄວາມສະອາດ,ຖືກຫຼັກອະນາໄມ.

6. ມີບ່ອນເກັບມ້ຽນສິ່ງເສດເຫຼືອ, ຂີ້ເຫຍື້ອເຄື່ອນຍ້າຍໄປຖິ້ມ ໃຫ້ເປັນປົກກະຕິ ແລະ ມີຮ່ອງລະບາຍນ້ຳເສຍ ທີ່ຖືກຕ້ອງຕາມຫຼັກການອະນາໄມ.

7. ຮັກສາບໍ່ໃຫ້ສັດປະເພດຕ່າງໆ ເຂົ້າມາລົບກວນຜູ້ໃຊ້ບໍລິການ.

8. ມີລະບົບປ້ອງກັນອັກຄີໄພ ທີ່ໄດ້ມາດຕະຖານຂອງຕຳຫຼວດນອດໄຟວາງອອກ, ຖ້າແມ່ນຮ້ານອາຫານ ແລະ ຮ້ານກິນດື່ມ-ບັນເທີງ ທີ່ປະກອບດ້ວຍລາຍການບັນເທີງ ຕ້ອງມີພະນັກງານປ້ອງກັນເພື່ອຮັກສາຄວາມສະຫງົບ.

9. ບໍລິການດ້ວຍລະບົບອາຫານຕາມລາຍການ ( ເມນູ ) ຕາມສັ່ງ ເຊິ່ງມີລາຍການອາຫານ ແລະ ລາຄາຈະແຈ້ງໃສ່ໃນລາຍການອາຫານ ເພື່ອໃຫ້ແຂກ, ນັກທ່ອງທ່ຽວມາຊົມໃຊ້ ມີຫຼາຍທາງເລືອກ.

10. ບຸກຄົນ ຫຼື ນິຕິບຸກຄົນ ທັງພາຍໃນ ແລະ ຕ່າງປະເທດ ທີ່ຈະສ້າງຕັ້ງວິສາຫະກິດ ເພື່ອດຳເນີນກິດຈະການທຸລະກິດການທ່ອງທ່ຽວ ຕ້ອງປະຕິບັດຕາມກົດໝາຍວ່າດ້ວຍວິສາຫະກິດ ແລະ ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ.

11. ເງື່ອນໄຂຂອງບຸກຄົນທີ່ຈະດຳເນີນທຸລະກິດການທ່ອງທ່ຽວ.
- ມີອາຍຸແຕ່ 18 ປີຂຶ້ນໄປ.
- ບໍ່ເປັນບ້າເສຍຈິດ.
- ບໍ່ເຄີຍຖືກສານຕັດສິນລົງໂທດ ຕັດອິດສະລະພາບ.
- ມີທະບຽນວິສາຫະກິດຖືກຕ້ອງຕາມກົດໝາຍ.
- ປະຕິບັດພັນທະຕໍ່ລັດຕາມລະບຽບກົດໝາຍຢ່າງຖືກຕ້ອງ.
- ບໍ່ຢູ່ໃນໄລຍະການປະຕິບັດຄຳຕັດສິນຂອງສານເປັນຜູ້ລົ້ມລະລາຍ.

12. ຂັ້ນຕອນຂໍອະນຸຍາດດຳເນີນທຸລະກິດ
- ໃບອະນຸຍາດດຳເນີນທຸລະກິດທ່ອງທ່ຽວ ຕ້ອງໄດ້ຢັ້ງຢືນສືບຕໍ່ດຳເນີນບໍລິການທ່ອງທ່ຽວ ໃນແຕ່ລະປີ, ສ່ວນບໍລິສັດທ່ອງທ່ຽວ 2 ປີ ຕໍ່ຄັ້ງ.

**ມາດຕາ 16: ຄະນະກຳມະການກວດກາຂັ້ນແຂວງ ແລະ ຂັ້ນເມືອງ.**

- ຄະນະກຳມະການກວດກາຂັ້ນແຂວງ ແມ່ນຖືກແຕ່ງຕັ້ງໂດຍທ່ານເຈົ້າແຂວງ, ຊຶ່ງປະກອບດ້ວຍຂະແໜງການທີ່ກ່ຽວຂ້ອງດັ່ງນີ້:

| | |
|---|---|
| 1. ຮອງເຈົ້າແຂວງ ຜູ້ຊີ້ນຳວຽກງານວັດທະນະທຳ-ສັງຄົມ | ເປັນຫົວໜ້າ |
| 2. ຮອງຫົວໜ້າ ພະແນກຖະແຫຼງຂ່າວ,ວັດທະນະທຳ ແລະ ທ່ອງທ່ຽວ | ເປັນຮອງ |
| 3. ຮອງຫົວໜ້າ ພະແນກອຸດສາຫະກຳ-ການຄ້າແຂວງ | ເປັນຄະນະ |
| 4. ຮອງຫົວໜ້າ ກອງບັນຊາການ ປ້ອງກັນຄວາມສະຫງົບແຂວງ | ເປັນຄະນະ |
| 5. ຮອງຫົວໜ້າ ພະແນກການເງິນແຂວງ | ເປັນຄະນະ |
| 6. ຮອງຫົວໜ້າ ພະແນກ ສາທາລະນະສຸກແຂວງ | ເປັນຄະນະ |
| 7. ຮອງຫົວໜ້າ ພະແນກ ແຮງງານ-ສະຫັວດດີການສັງຄົມແຂວງ | ເປັນຄະນະ |
| 8. ຮອງຫົວໜ້າ ພະແນກ ໂຍທາທິການ ແລະ ຂົນສົ່ງແຂວງ | ເປັນຄະນະ |
| 9. ຫົວໜ້າຂະແໜງທ່ອງທ່ຽວ | ເປັນຄະນະ |

- **ສິດ ແລະ ໜ້າທີ່:**
1. ເປັນເສນາທິການໃຫ້ເຈົ້າແຂວງກ່ຽວກັບການຄຸ້ມຄອງບັນດາຫົວໜ່ວຍທຸລະກິດການທ່ອງທ່ຽວພາຍໃນແຂວງ.
2. ຄົ້ນຄວ້ານະໂຍບາຍໃຫ້ສອດຄ່ອງກັບລະບຽບການຕ່າງໆ.
3. ກຳນົດແຜນການເຄື່ອນໄຫວຂອງຄະນະກຳມະການໃຫ້ເປັນແຕ່ລະໄລຍະ ( 3 ເດືອນ, 6 ເດືອນ, 9 ເດືອນ ແລະ 1 ປີ ).
4. ພະແນກການທີ່ກ່ຽວຂ້ອງມີໜ້າທີ່ຄຸ້ມຄອງ, ຕິດຕາມ, ກວດກາຕາມພາລະບົດບາດ ສິດ ໜ້າທີ່ຂອງຕົນ.
5. ຄົ້ນຄ້ວາແກ້ໄຂປະກົດການຫຍໍ້ທໍ້ທີ່ເກີດຂື້ນຢູ່ບັນດາຫົວໜ່ວຍທຸລະກິດບໍລິການດ້ານການທ່ອງທ່ຽວພາຍໃນແຂວງ.

- **ຄະນະກຳມະການກວດກາຂັ້ນເມືອງ ແມ່ນຖືກແຕ່ງຕັ້ງໂດຍທ່ານເຈົ້າເມືອງ, ຊຶ່ງປະກອບດ້ວຍພາກສ່ວນທີ່ກ່ຽວຂ້ອງດັ່ງນີ້:**

| | |
|---|---|
| 1. ຮອງເຈົ້າເມືອງ ຜູ້ຊີ້ນຳວຽກງານວັດທະນະທຳ-ສັງຄົມ | ເປັນຫົວໜ້າ |
| 2. ຮອງຫົວໜ້າຫ້ອງການຖະແຫຼງຂ່າວ,ວັດທະນະທຳ ແລະ ທ່ອງທ່ຽວເມືອງ | ເປັນຮອງ |
| 3. ຮອງຫົວໜ້າກອງບັນຊາການ ປ້ອງກັນຄວາມສະຫງົບ ເມືອງ | ເປັນຄະນະ |
| 4. ຮອງຫົວໜ້າຫ້ອງການອຸດສາຫະກຳ- ການຄ້າເມືອງ | ເປັນຄະນະ |
| 5. ຮອງຫົວໜ້າຫ້ອງການການເງິນເມືອງ | ເປັນຄະນະ |
| 6. ຮອງຫົວໜ້າຫ້ອງການສາທາລະນະສຸກເມືອງ | ເປັນຄະນະ |
| 7. ຮອງຫົວໜ້າຫ້ອງການແຮງງານ-ສະຫັວດດີການສັງຄົມເມືອງ | ເປັນຄະນະ |
| 8. ຮອງຫົວໜ້າຫ້ອງການໂຍທາທິການ ແລະ ຂົນສົ່ງເມືອງ | ເປັນຄະນະ |
| 9. ຫົວໜ້າໜ່ວຍງານທ່ອງທ່ຽວ | ເປັນຄະນະ |
| 10. ຕາງໜ້າອຳນາດການປົກຄອງບ້ານ ທີ່ທຸລະກິດຕັ້ງຢູ່ | ເປັນຄະນະ |

- **ສິດ ແລະ ໜ້າທີ່:**
1. ເປັນເສນາທິການໃຫ້ເຈົ້າເມືອງກ່ຽວກັບການຄຸ້ມຄອງບັນດາຫົວໜ່ວຍທຸລະກິດການທ່ອງທ່ຽວພາຍໃນເມືອງ.
2. ຄົ້ນຄວ້ານະໂຍບາຍໃຫ້ສອດຄ່ອງກັບລະບຽບການຕ່າງໆ.

3. ກຳນົດແຜນການເຄື່ອນໄຫວຂອງຄະນະກຳມະການໃຫ້ເປັນແຕ່ລະໄລຍະ ( 3 ເດືອນ, 6 ເດືອນ, 9 ເດືອນ ແລະ 1 ປີ ).

4. ພະແນກການທີ່ກ່ຽວຂ້ອງມີໜ້າທີ່ຄຸ້ມຄອງ, ຕິດຕາມ, ກວດກາຕາມພາລະບົດບາດ ສິດ ໜ້າທີ່ຂອງຕົນ.

5. ຄົ້ນຄ້ວາແກ້ໄຂປະກົດການຫຍໍ້ທໍ້ທີ່ເກີດຂຶ້ນຢູ່ບັນດາຫົວໜ່ວຍທຸລະກິດບໍລິການດ້ານການທ່ອງທ່ຽວພາຍໃນເມືອງ.

6. ສະຫຼຸບສະພາບການເຄື່ອນໄຫວວຽກງານຮອບດ້ານກ່ຽວກັບການຄຸ້ມຄອງບັນດາຫົວໜ່ວຍທຸລະກິດໃຫ້ສາຍຕັ້ງສາຍຂວາງຢ່າງເປັນປົກກະຕິ.

**ມາດຕາ 17: ສິດ ແລະ ພັນທະ ຂອງຜູ້ດຳເນີນກິດຈະການທຸລະກິດ ວັດທະນະທຳ ແລະ ການທ່ອງທ່ຽວ.**

1. ເຄົາລົບ ແລະ ປະຕິບັດຂໍ້ຕົກລົງສະບັບນີ້ ແລະ ລະບຽບກົດໝາຍອື່ນທີ່ກ່ຽວຂ້ອງ.

2. ປະກອບເອກະສານໃຫ້ຖືກຕ້ອງ ຕາມຂັ້ນຕອນ ຂອງລະບຽບ, ກົດໝາຍ.

3. ປົກປັກຮັກສາສິ່ງແວດລ້ອມທຳມະຊາດ, ຮີດຄອງປະເພນີອັນດີງາມຂອງຊາດ,ຄວາມສະອາດ, ຄວາມປອດໄພ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ແລະ ປະຕິບັດພັນທະຕໍ່ລັດຢ່າງເຂັ້ມງວດ.

4. ຖ້າເປັນຄົນຕ່າງປະເທດ ຕ້ອງມີພາດສະປໍ, ວີຊາທຸລະກິດ, ບັດອອກແຮງງານ ຈາກກົມແຮງງານກະຊວງແຮງງານ ແລະ ສະຫວັດດີການ-ສັງຄົມ ແລະ ອະນຸຍາດຈາກກົມຕຳຫຼວດກວດຄົນອອກ-ເຂົ້າເມືອງ.

5. ປະຕິບັດໂມງເວລາ ຢ່າງເຂັ້ມງວດ ແລະ ສຳລັບກາງແຈ້ງ ປິດສຽງບໍລິການບໍ່ໃຫ້ກາຍ 22:30 ໂມງ ແລະ ສຳລັບບ່ອນທີ່ເກັບສຽງ ບໍ່ລົບກວນຄົນອື່ນ 23:30 ໂມງ.

6. ປະຕິບັດພັນທະອາກອນຕ່າງໆ ໃຫ້ແກ່ລັດ.

7. ອຳນວຍຄວາມສະດວກ ໃນການຕິດຕາມກວດກາ ຂອງພາກສ່ວນກ່ຽວຂ້ອງ.

## **ໝວດທີ** 4
## **ວ່າດ້ວຍຂໍ້ຫ້າມ**

**ມາດຕາ 18: ຂໍ້ຫ້າມສຳລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ.**

1. ຫ້າມຈັດງານລຳວົງ, ຂາຍເຄື່ອງດື່ມທີ່ເປັນຂອງມຶນເມົາ ແລະ ຫຼິ້ນການພະນັນຕ່າງໆ ຢູ່ໃນງານບຸນປະເພນີທີ່ຈັດຂຶ້ນຢູ່ໃນວັດ ແລະ ນຳເອົາພະພຸດທະຮູບ, ເທວະຮູບ, ຮູບພະເຈົ້າ ແລະ ວັດຖຸທານຕ່າງໆໃສ່ຍານພາຫະນະແລ້ວແຫ່ແພ່ປັດໃຈໄປຕາມທ້ອງຖະໜົນຫຼວງ.

2. ຫ້າມບຸກຄົນ, ນິຕິບຸກຄົນ, ຂັບລຳ ແລະ ຮ້ອງເພງ, ເປັນພາສາຕ່າງປະເທດໃນເວທີກາງແຈ້ງເກີນ 30% ຂຶ້ນໄປ ແລະ ຫ້າມບຸກຄົນນຸ່ງເຄື່ອງບໍ່ສຸພາບ ໂດຍສະເພາະເພດຍິງບໍ່ໃຫ້ ນຸ່ງໂສ້ງ, ນຸ່ງສະເກີດ, ນຸ່ງກະໂປ່ງ, ເສື້ອສາຍດ່ຽວ, ເສື້ອບາງເປີດແປນ ເຂົ້າໄປວັດ.

3. ຫ້າມບໍ່ໃຫ້ໃຊ້ນ້ຳເປິເປື້ອນ, ນ້ຳຄັນຄາຍ, ນ້ຳປົນສີ, ນ້ຳໃສ່ຖົງຢາງ, ໂຍນໃສ່ກັນ ແລະ ເອົາຖັງນ້ຳໃສ່ລົດເລາະຫົດສິ່ງກັນໃນງານຫຼິ້ນບຸນປີໃໝ່ລາວ.

4.ຫ້າມ ບຸກຄົນ, ນິຕິບຸກຄົນ ຈັດຕັ້ງງານແຕ່ງດອງ ມີລັກສະນະເປັນທຸລະກິດ, ຊ່ວງເສັ່ງຖານະອິດທິພົນທາງສັງຄົມ ແລະ ເສດຖະກິດການເງິນ ແລະ ເປີດເຄື່ອງຂະຫຍາຍສຽງ, ເສບດົນຕີ, ຂັບລຳ, ຮ້ອງເພງ ບໍ່ໃຫ້ກາຍ 22:30 ໂມງ, ສຳລັບບ່ອນທີ່ເສັບສຽງບໍ່ລົບກວນຄົນອື່ນ 23:30 ນາທີ ແລະ ຫ້າມຈັດຂະບວນແຫ່ບ່າວເຂີຍ ຫຼື ແຫ່ສາວໃພ້ ທີ່ຂັດກັບຮີດຄອງປະເພນີ ອັນດີງາມຂອງຊາດ, ຂອງເຜົ່າ ແລະ ບໍ່ໃຫ້ ກີດຂວາງການສັນຈອນ, ເຈົ້າພາບຢືນຮັບແຂກໃນງານດອງບໍ່ໃຫ້ເກີນ 9 ຄູ່ ແລະ ການຈັດຮອບລຳວົງໃຫ້ແຂກບໍ່ໃຫ້ເອົ້າຕຳແໜ່ງໃນງານ ( ຍົກເວັ້ນງານທາງລັດຖະການເທົ່ານັ້ນ ).

5. ຫ້າມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງສະເຫຼີມສະຫຼອງວັນສຳຄັນອື່ນໆ ເກີນຂອບເຂດ ເຊັ່ນ: ວັນວາເລັນທາຍ, ຄຼິສະມາດ, ວັນຮາລະວີນ; ວັນເກີດ, ງານລ້ຽງສະຫຼອງ ຕຳແໜ່ງ, ສະຫຼອງໃບປະກາດສະນີຍະບັດ ແລະ ລ້ຽງສິ່ງ , ງານສ້າງສັນ ທີ່ມີລັກສະນະຟົດຟື້ນເກີນຂອບເຂດທີ່ບໍ່ສອດຄ່ອງກັບບຸນຮີດຄອງປະເພນີຂອງລາວເຮົາ.

6. ຫ້າມປັ່ງສິບໃສ່ສະຖານທີ່ຊຸມຊົນແອອັດ, ຈຸດເຜົາ ຫຼື ຝັງສົບໃສ່ບອດຫ້ວຍນ້ຳລຳທານ, ກໍ່ກອງຟອນ-ຈູດ ຫຼື ຝັງສົບໄວ້ແຄມຖະໜົນຫົນທາງ ແລະ ການຄົບງັນເຮືອນດີ ເກີນ 3 ວັນ ຫຼັງຈາກມັງຄານບສິ່ງສະການ.

7. ຫ້າມບຸກຄົນນິຕິບຸກຄົນ, ການຈັດຕັ້ງ, ຕິດປ້າຍໂຄສະນາ, ພິມໃສ່ໂສ້ງ, ເສື້ອ ທີ່ເປັນການອອກແບບໃນງານ ຕ່າງໆ ໂດຍບໍ່ໄດ້ຮັບອານຸຍາດຈາກຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເມື່ອໄດ້ຮັບອະນຸຍາດແລ້ວບໍ່ໃຫ້ຕິດຊະຊາຍ ເຊັ່ນ ຕົ້ນໄມ້, ຮົ້ວຮາວ ບໍ່ມີຄວາມເປັນລະບຽບຮຽບຮ້ອຍ.

8. ຫ້າມບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ສ້າງຕັ້ງ ແລະ ຫຼິ້ນເກມ ການພະນັນທຸກປະເພດ ແລະ ການອອກແບບພິມທີ່ບໍ່ສອດຄ່ອງ, ນຳເຂົ້າຈໍລະຈອນ, ຈຳໜ່າຍປຶ້ມ, ສິ່ງພິມອື່ນໆ ທີ່ບໍ່ໄດ້ຮັບອະນຸຍາດຈາກພາກສ່ວນທີ່ກ່ຽວຂ້ອງ.

9. ຫ້າມທຳລາຍພຣະພຸດທະຮູບ, ເທວະຮູບ, ບູຮານສະຖານ, ປູສະນີຍະສະຖານ, ສະຖານທີ່ປະຫວັດສາດ ແລະ ຈັບຈອງ ທີ່ດິນເຂດອະນຸລັກມໍລະດົກແຫ່ງຊາດ, ມໍລະດົກທ້ອງຖິ່ນ ປ່ຽນແປງສະຖານະພາບເດີມຂອງມໍລະດົກໄປສູ່ສະພາບອື່ນທີ່ບົດເບືອນເອກະລັກທີ່ເປັນປະຫວັດສາດ;

10. ຫ້າມຈົດກ່າຍ, ລອກແບບ ເອົາຜົນງານການຄົ້ນຄວ້າ, ປະດິດແຕ່ງຂອງຜູ້ອື່ນ ກ່ຽວກັບມໍລະດົກແຫ່ງຊາດ, ມໍລະດົກທ້ອງຖິ່ນ ມາເປັນລິຂະສິດຂອງຕົນ ຫຼື ພິມເຜີຍແຜ່ໂດຍບໍ່ໄດ້ຮັບອະນຸຍາດຈາກເຈົ້າຂອງລິຂະສິດ ແລະ ຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ;

11. ຫ້າມ ຂຸດຄົ້ນຊັບພະຍາກອນທຳມະຊາດຢູ່ໜ້າດິນ, ໃຕ້ດິນ, ໃຕ້ນ້ຳໃນເຂດມໍລະດົກແຫ່ງຊາດ, ມໍລະດົກທ້ອງຖິ່ນ ຈັບຈອງທີ່ດິນເຂດປົກປັກຮັກສາຊີວະນາໆພັນ, ສວນອຸດທິຍານ ແລະ ເຂດທິວທັດທຳມະຊາດ ລວມທັງການປ່ຽນແປງສະຖານະພາບເດີມຂອງມໍລະດົກແຫ່ງຊາດ ແລະ ມໍລະດົກທ້ອງຖິ່ນ.

12. ຫ້າມນຳເຂົ້າ, ຈຳໜ່າຍ, ຊື້-ຂາຍ, ແລະ ເຜີຍແຜ່ ຜະລິດຕະພັນທາງດ້ານວັດທະນະທຳຂອງຕ່າງປະເທດ ທີ່ເປັນວັດຖຸ ໂດຍສະເພາະພຣະພຸດທະຮູບ, ເທວະຮູບ ຫຼື ບໍ່ເປັນວັດຖຸ ທີ່ບໍ່ສອດຄ່ອງກັບວັດທະນະທຳ, ຮີດຄອງປະເພນີອັນດີງາມຂອງຊາດລາວ.

13. ຫ້າມນຳເອົາຜົນງານວິຈິດສິນ ເປັນເຄື່ອງມືໃນການເຄື່ອນໄຫວ, ໂຄສະນາບິດເບືອນ, ໃສ່ຮ້າຍປ້າຍສີ, ຍຸແຍ່, ແບ່ງແຍກຄວາມສາມັກຄີປອງດອງ ລະຫວ່າງ ບັນດາເຜົ່າ, ສາສະໜາ, ແນວທາງນະໂຍບາຍຂອງພັກ, ກົດໝາຍຂອງລັດ ແລະ ມ້າງເພ, ທຳລາຍມູນເຊື້ອວັດທະນະທຳ ອັນດີງາມຂອງຊາດ, ຂອງບັນດາເຜົ່າ, ສິລະປະດ້ານວິຈິດສິນທີ່ເປັນພິດໄພ, ເຊື່ອມຊາມ, ຊອດກະຈາ, ລາມົກ, ອານາຈານ ແລະ ສິ່ງອື່ນມາຈັດຕັ້ງເຜີຍແຜ່ຢ່າງເດັດຂາດ.

14. ຫ້າມຊື້-ຂາຍ ເຜີຍແຜ່, ນຳເຂົ້າ-ສົ່ງອອກ ຮູບເງົາ ໂດຍບໍ່ໄດ້ຮັບອະນຸຍາດຢ່າງເດັດຂາດ ແລະ ຫ້າມນັກສິລະປິນເວົ້າສຽດສີສັງຄົມ ແລະ ມົ້ວສຸມອາບາຍຍະມຸກຕ່າງໆທີ່ຜິດກັບລະບຽບກົດໝາຍ ແລະ ຮີດຄອງປະເພນີລາວ.

15. ຫ້າມບຸກຄົນ, ນິຕິບຸກຄົນ,ການຈັດຕັ້ງ, ໂຮງແຮມ, ລີສອດ, ເຮືອນພັກ, ຮ້ານອາຫານ, ຮ້ານກິນດື່ມ. ນຳເອົານັກສິລະປິນທຸກປະເພດມາສະແດງຮັບໃຊ້ ໂດຍບໍ່ໄດ້ຮັບອະນຸຍາດຈາກພາກສ່ວນທີ່ກ່ຽວຂ້ອງ.

16. ຫ້າມໂຮງແຮມ, ເຮືອນພັກ, ລີສອດ, ຮ້ານອາຫານ ແລະ ຮ້ານກິນດື່ມ ຄ້າປະເວນີ, ຫຼິ້ນການພະນັນ, ມົວສຸມສິ່ງເສບຕິດທຸກ ປະເພດ ຢ່າງເດັດຂາດ.

17. ຫ້າມພົວພັນສະແຫວງຫາຜົນປະໂຫຍດໂດຍທີ່ບໍ່ຖືກຕ້ອງຕາມລະບຽບກົດໝາຍ ຈາກນັກທ່ອງທ່ຽວໂດຍບໍ່ຖືກຕ້ອງຕາມລະບຽບກົດໝາຍ.

18. ຫ້າມເອົາໃບທະບຽນທຸລະກິດການທ່ອງທ່ຽວໃຫ້ຜູ້ອື່ນເຊົ່າ ຫຼື ນຳໃຊ້ໂດຍບໍ່ຖືກຕ້ອງ ແລະ ຫ້າມຕັ້ງຮ້ານບັນເທີງຢູ່ໃກ້ສະຖານທີ່ ການສຶກສາ, ວັດ,ໂຮງໝໍ ແລະ ສຳນັກງານອົງການ 500 ແມັດ.

**ມາດຕາ 19: ຂໍ້ຫ້າມສຳລັບພະນັກງານຂອງລັດ.**

1. ຫ້າມສົມຮູ້ຮ່ວມຄິດ ກັບຜູ້ດຳເນີນທຸລະກິດ ໃນການປອມແປງເອກະສານລາຍເຊັນ, ຕາປະທັບ ແລະ ການກະທຳອື່ນ ທີ່ອຳນວຍຜົນປະໂຫຍດ ໂດຍບໍ່ຊອບທຳ ຝ່າຝືນລະບຽບການ ແລະ ກົດໝາຍ.

2. ຫ້າມກົດໜ່ວງຖ່ວງດຶງເອກະສານ, ຫຼອກລວງ, ສໍ້ໂກງ, ນາບຂູ່ຜູ້ດຳເນີທຸລະກິດ ເພື່ອສະແຫວງຫາຜົນປະໂຫຍດ ມາໃຫ້ຕົນ, ຄອບຄົວ ແລະ ພັກພວກ.

3. ຫ້າມນຳໃຊ້, ດັດແປງ, ປັບປ່ຽນເນື້ອໃນ ແລະ ຮູບແບບຂອງເອກະສານ ຂອງຜູ້ປະກອບການໂດຍພະລາການ.

4. ຫ້າມເຄື່ອນໄຫວທີ່ສ້າງຄວາມອັບປະໂຫຍດໃຫ້ແກ່ນັກທຸລະກິດມີຄວາມເສຍຫາຍ ທີ່ເປັນການລະເມີດລະບຽບ, ກົດໝາຍ.

## ໝວດທີ 5
## ນະໂຍບາຍຕໍ່ຜູ້ທີ່ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 20: ນະໂຍບາຍຕໍ່ຜູ້ມີຜົນງານ.**

ບຸກຄົນ, ນິຕິບຸກຄົນ, ພະນັກງານ ແລະ ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນໆຕາມລະບຽບການ.

**ມາດຕາ 21: ມາດຕະການຕໍ່ຜູ້ລະເມີດໃນການດຳເນີນທຸລະກິດວັດທະນະທຳ-ທ່ອງທ່ຽວ.**

ບຸກຄົນ, ນິຕິບຸກຄົນ, ພະນັກງານ ແລະ ການຈັດຕັ້ງທີ່ກ່ຽວຂ້ອງ ທີ່ມີການລະເມີດ ຂໍ້ຕົກລົງ ສະບັບນີ້ຈະຖືກປະຕິບັດຄື:

1. ຈະຖືກສຶກສາອົບຮົມ ແລະ ກ່າວເຕືອນຄວາມຜິດ, ເຮັດບົດບັນທຶກເປັນລາຍລັກອັກສອນ.
2. ຈະຖືກປັບໃໝ 500.000-1.000.000 ກີບ ຫຼື ໂຈ່ະການດຳເນີນທຸລະກິດຊົ່ວຄາວ.
3. ຈະຖືກຖອນໃບອະນຸຍາດດາເນີນທຸລະກິດ ແລະ ໃຫ້ຢຸດຕິການບໍລິການ
4. ຈະຖືກດຳເນີນຄະດີຕາມກົດໝາຍ ແລ້ວແຕ່ກໍລະນີ ເບົາ ຫຼື ໜັກ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

**ມາດຕາ 22: ການຈັດຕັ້ງປະຕິບັດ.**

ມອບໃຫ້ພະແນກຖະແຫຼງຂ່າວ,ວັດທະນະທຳ ແລະ ທ່ອງທ່ຽວ ແຂວງຈັດຕັ້ງການເຜີຍແຜ່ໃຫ້ກວ້າງຂວາງ ແລະ ພາກສ່ວນຕ່າງໆໃນທົ່ວ ແຂວງ, ບຸກຄົນ, ນິຕິບຸກຄົນ, ນັກທຸລະກິດ, ພະນັກງານ, ທະຫານ, ຕຳຫຼວດ ແລະ ການຈັດຕັ້ງທຸກພາກສ່ວນ ຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນເປັນຢ່າງດີ.

**ມາດຕາ 23: ຜົນສັກສິດ.**

ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນ ແລະ ວັນລົງຈົດໝາຍເຫດທາງລັດຖະການເປັນຕົ້ນໄປ.

**ເຈົ້າແຂວງ**

ແຂວງໄຊຍະບູລີ ... ເຈົ້າແຂວງ

ພົງສະຫວັນ ສິດທະວົງ